ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ
ຫ້ອງການ ເລກທີ: 1824/ຫອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 17 ສິງຫາ 2017

# ແຈ້ງການ

ຮຽນ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ;
ທ່ານ ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງທີ່ມີຊາຍແດນຕິດກັບ ສສ ຫວຽດນາມ.

ເລື່ອງ: ການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ສິດພິເສດຕາມສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ

- ອີງຕາມ ສັນຍາວ່າດ້ວຍການຄ້າຊາຍແດນ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ສະບັບລົງວັນທີ 27 ມິຖຸນາ 2015;
- ອີງຕາມ ບົດແນະນຳ ກ່ຽວກັບການຈັດຕັ້ງປະຕິບັດບາງມາດຕາ ໃນສັນຍາການຄ້າຊາຍແດນ ລາວ-ຫວຽດນາມ ສະບັບເລກທີ 0280/ອຄ.ກນຄຕ, ລົງວັນທີ 27 ກຸມພາ 2017;
- ອີງຕາມ ຄຳແນະນຳ ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ສະບັບເລກທີ 2225/ອຄ.ກຂອ, ລົງວັນທີ 05 ທັນວາ 2014.

ເພື່ອເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດສັນຍາການຄ້າຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າ ສັນຍາການຄ້າຊາຍແດນ ລາວ-ຫວຽດນາມ) ກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດພິເສດ ໃຫ້ມີຄວາມເປັນເອກະພາບກັນໃນທົ່ວປະເທດ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ ປະຕິບັດ ດັ່ງນີ້:
   1.1. ອອກໃບຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດຕາມທີ່ລະບຸໃນຂໍ້ 01 ມາດຕາ 06 (ເອກະສານຊ້ອນທ້າຍ 01) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;
   1.2. ສະເພາະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ທີ່ມີຊາຍແດນຕິດກັບ ສສ ຫວຽດນາມ ສາມາດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຕາມທີ່ລະບຸໄວ້ໃນ ມາດຕາ 07 (ເອກະສານຊ້ອນທ້າຍ 02 ແລະ 03) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;
   1.3. ຊຸກຍູ້, ເຜີຍແຜ່, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກ່ຽວກັບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຂອງບັນດາເມືອງຊາຍແດນ;

1.4. ສັງລວມ ແລະ ວິໄຈ ຂໍ້ມູນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ເພື່ອລາຍງານໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການນຳເຂົ້າ ແລະ ສົ່ງອອກ) ຊາບຢ່າງເປັນປົກກະຕິ;

1.5. ລາຍງານສະຖິຕິການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຊາບທຸກ 03 ເດືອນ ໂດຍຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນສຸດທ້າຍ;

1.6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ;

1.7. ເກັບຮັກສາສຳເນົາເອກະສານການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຄົບຊຸດເປັນໄລຍະເວລາ 02 ປີ;

1.8. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງຝ່າຍລາວ ຫຼື ຝ່າຍຫວຽດນາມ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນ ໃນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.

2. ມອບໃຫ້ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ທີ່ມີຊາຍແດນຕິດກັບ ສສ ຫວຽດນາມ ປະຕິບັດດັ່ງນີ້:

2.1 ອອກໃບຢັ້ງຢືນແຫຼ່ງກຳເນີດໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດຕາມທີ່ລະບຸໃນຂໍ້ 04 ມາດຕາ 05 ແລະ ມາດຕາ 07 (ເອກະສານຊ້ອນທ້າຍ 02 ແລະ 03) ຂອງສັນຍາການຄ້າຊາຍແດນ ລາວ-ຫວຽດນາມ;

2.2 ລາຍງານສະຖິຕິການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ຂອງຕົນຊາບທຸກ 03 ເດືອນ ໂດຍຊ້າສຸດບໍ່ໃຫ້ກາຍວັນທີ 10 ຂອງເດືອນສຸດທ້າຍ;

2.3 ເກັບຄ່າທຳນຽມ ແລະ ຄ່າບໍລິການ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ;

2.4 ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງພາຍໃນເມືອງ ແລະ ປະສານກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ ເພື່ອພ້ອມກັນແກ້ໄຂບັນຫາທີ່ເກີດຂຶ້ນ ໃນການຈັດຕັ້ງປະຕິບັດການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;

2.5 ເກັບຮັກສາສຳເນົາເອກະສານການຢັ້ງຢືນແຫຼ່ງກຳເນີດສິນຄ້າ ຄົບຊຸດເປັນໄລຍະເວລາ 02 ປີ.

3. ສຳລັບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ແບບຟອມໃບຄຳຮ້ອງ ແລະ ແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໄດ້ມີເອກະສານຄັດຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ,

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ນ.ບານສະດີ ເທບພະວົງ